International Labour Organization | ILO/Korea Partnership Programme

ILO brief

# ແມ່ຍິງໃນກຳລັງແຮງງານ

ມັງກອນ 2023

ຄວາມແຕກຕ່າງລະຫວ່າງລັກສະນະຕະຫຼາດແຮງງານຂອງແມ່ຍິງທຽບກັບຜູ້ຊາຍສາມາດສະແດງໃຫ້ເຫັນຈາກອັດຕາສ່ວນຂອງແມ່ຍິງໂດຍແບ່ງຕາມສະຖານະພາບການຈ້າງງານ. ແມ່ຍິງມີຈຳນວນຫຼາຍໃນບັນດາສະມາຊິກຄອບຄົວທີ່ປະກອບສ່ວນເຂົ້າກຳລັງແຮງງານ, ເທົ່າກັບ 55% ຂອງກຳລັງແຮງງານໃນກຸ່ມນັ້ນ; ຫມາຍຄວາມວ່າມີແມ່ຍິງເຮັດວຽກຢູ່ໃນຄົວເຮືອນກວມອັດຕາສ່ວນຫຼາຍກ່ວາຜູ້ອື່ນໃນກຸ່ມກຳລັງແຮງງານທີ່ບໍ່ແມ່ນລັດຖະກອນໂດຍລວມ. ແມ່ຍິງທີ່ເປັນຜູ້ໃຊ້ແຮງງານແມ່ນ (31%), ຜູ້ອອກແຮງງານ (41%), ແລະ ຜູ້ປະກອບອາຊີບສ່ວນບຸກຄົນ (44%).

ຜົນການວິເຄາະຈຳນວນກຳລັງແຮງງານເພດຍິງແຍກຕາມຂະແໜງການເສດຖະກິດ, ເຫັນໄດ້ວ່າໂຕເລກແມ່ຍິງມີຈຳນວນຫຼາຍຂຶ້ນໃນບາງຂະແໜງການສະເພາະ, ເຊັ່ນ ຂະແໜງການສຶກສາ (72% ຂອງພະນັກງານສຶກສາແມ່ນແມ່ຍິງ), ແຮງງານເຮັດວຽກໃນຄົວເຮືອນ (64%), ທີ່ພັກ ແລະ ຮ້ານອາຫານ (62%), ການຜະລິດ (59%), ການບໍລິການ ອື່ນໆ (59%), ການຄ້າຂາຍຍົກ ແລະ ຂາຍຍ່ອຍ (58%), ບໍລິການ (55%), ແລະ ສາທາລະນະສຸກ (51% ຂອງພະນັກງານຂະແໜງສາທາລະນະສຸກແມ່ນແມ່ຍິງ). ແຮງງານເພດຍິງມີບໍ່ຫຼາຍໃນຂະແໜງຂົນສົ່ງ (8%), ກໍ່ສ້າງ (8%), ອຸດສາຫະກຳອື່ນໆ (16%), ຂະແໜງອຸດສາຫະກຳ (39%), ແລະ ການບໍລິຫານລັດ (41%).

ດັ່ງນັ້ນ, ຈຳເປັນຕ້ອງມີຄວາມພະຍະຍາມ ແລະ ນະໂຍບາຍສະເພາະເພື່ອຮັບປະກັນຄວາມສະເໝີພາບດ້ານບົດບາດຍິງຊາຍໃນການຂະຫຍາຍເຂດປົກຄຸມປະກັນສັງຄົມ ແລະ ສິດທິດ້ານແຮງງານ.




ແຮງງານແມ່ຍິງປະກອບສ່ວນເຂົ້າກຳລັງແຮງງານເປັນສ່ວນຫຼາຍຖ້າທຽບໃສ່ຈຳນວນສະມາຊິກຄອບຄົວທັງໝົດ (55% ຂອງກຳລັງແຮງງານ) ແລະ ກວມອັດຕາສ່ວນສ່ວນໜ້ອຍໃນກຸ່ມຜູ້ໃຊ້ແຮງງານ (31%), ຜູ້ອອກແຮງງານ (41%) ແລະ ຜູ້ປະກອບອາຊີບສ່ວນບຸກຄົນ(44%).

ບົດສະຫຼຸບຫຍໍ້ຂອງອົງການແຮງງານສາກົນແມ່ນສ່ວນໜຶ່ງຂອງຜົນການສຶກສາດ້ານປະລິມານຂອງກຳລັງແຮງງານ ແລະ ໂຄງສ້າງດ້ານວິສາຫະກິດໃນ ສປປ ລາວ ເພື່ອເຂົ້າໃຈເລິກເຊິ່ງກ່ຽວກັບພາບລວມຂອງແຮງງານນອກລະບົບເພື່ອນຳມາສູ່ການອອກແບບນະໂຍບາຍປະກັນສັງຄົມ. ການສຶກສາຄັ້ງນີ້ແມ່ນໄດ້ຮັບທຶນສະໜັບສະໜູນຈາກໂຄງການຮ່ວມມືຂອງອົງການແຮງງານສາກົນ ແລະ ສ. ເກົາຫຼີ ແລະ ດຳເນີນການສຶກສາໂດຍສະຖາບັນຄົ້ນຄ້ວາດ້ານການຄຸ້ມຄອງນະໂຍບາຍອ້ອດສຟອດ.

ໂດຍການຮ່ວມມືກັບ


ລາຍລະອຽດການຕິດຕໍ່

**ສຳນັກງານອົງການແຮງງານສາກົນສຳລັບພາກພື້ນອາຊີ ແລະ ປາຊິຟິກ**

ຕຶກສະຫະປະຊາຊາດ, ຖະໜົນລາດສະດຳເນີນນອກ, ບາງກອກ 10200, ຣາຊະອານາຈັກໄທ

ໂທລະສັບ: +66 2288 1234
ແຟັກ: +66 2280 1735
ອີເມວ: BANGKOK@ilo.org

| | | | |
|---|---|---|---|
| ນາງ ເລີບລິນ ເດ | ຜູ້ຈັດການໂຄງການ | ອີເມວ: | del@ilo.org |
| ທ. ທອງເຫຼັກ ຊີງ | ຜູ້ປະສານງານໂຄງການ | ອີເມວ: | thongleck@ilo.org |
| ນ. ນຸດທອງ ອາລຸນທອງ | ຜູ້ປະສານງານໂຄງການ | ອີເມວ: | alounthong@ilo.org |


© ອົງການແຮງງານສາກົນ 2023